ກະຊວງວິທະຍາສາດແລະເຕັກໂນໂລຊີ
ຂາເຂົ້າ
ເລກທີ - 1310 ກວຕ
ລົງວັນທີ 08 JUL 2014
ເວລາ - 1336
ສົ່ງເຖິງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------

ນາຍົກລັດຖະມົນຕີ

ເລກທີ 221 /ນຍ
ນະຄອນຫຼວງວຽງຈັນ, ລົງວັນທີ 2.7.2014

# ດຳລັດ
# ຂອງນາຍົກລັດຖະມົນຕີ
# ວ່າດ້ວຍການຮັບຮອງ ແລະ ການຍົກເວັ້ນ
# ສະເພາະທີ່ພົວພັນກັບໂຄງການເຂື່ອນໄຟຟ້ານ້ຳຕົກນ້ຳງຽບ 1

ໂດຍອີງຕາມ:

- ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003
- ກົດໝາຍວ່າດ້ວຍການສ້າງນິຕິກຳ ເລກທີ 19/ສພຊ, ລົງວັນທີ 12 ກໍລະນີ 2012;
- ກົດໝາຍວ່າດ້ວຍໄຟຟ້າ (ປັບປຸງ) ເລກທີ 03/ສພຊ, ລົງວັນທີ 20 ທັນວາ 2011;
- ກົດໝາຍວ່າດ້ວຍທີ່ດິນ ເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003;
- ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ເລກທີ 02-96/ສພຊ, ລົງວັນທີ 11 ຕຸລາ 1996;
- ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເລກທີ 119/ນຍ, ລົງວັນທີ 20 ເມສາ 2011;
- ດຳລັດວ່າດ້ວຍປ່າປ້ອງກັນ ເລກທີ 333/ນຍ, ລົງວັນທີ 19 ກໍລະກົດ 2010;
- ດຳລັດວ່າດ້ວຍການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ເລກທີ 135/ນຍ, ລົງວັນທີ 25 ພຶດສະພາ 2009;
- ດຳລັດວ່າດ້ວຍລະບອບປະກັນສັງຄົມສຳລັບພະນັກງານວິສາຫະກິດ ເລກທີ 207/ນຍ, ລົງວັນທີ 23 ທັນວາ 1999;
- ສັນຍາສຳປະທານໂຄງການເຂື່ອນໄຟຟ້ານ້ຳຕົກນ້ຳງຽບ1 (ສັນຍາສຳປະທານ) ລົງວັນທີ 27 ສິງຫາ 2013 ເຊິ່ງເຊັນຮ່ວມກັນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ, ຕາງໜ້າໂດຍ ກະຊວງແຜນການ ແລະ ການລົງທຶນ ແລະ ບໍລິສັດ ໄຟຟ້ານ້ຳງຽບ 1 ຈຳກັດ (ບໍລິສັດ) ທີ່ກ່ຽວກັບ ໂຄງການເຂື່ອນໄຟຟ້ານ້ຳຕົກນ້ຳງຽບ 1 (ໂຄງການ);

- ສັນຍາເຊົ່າທີ່ດິນສຳລັບສິດນຳໃຊ້ທີ່ດິນສະເພາະຜູ້ດຽວຂອງພື້ນທີ່ບາງສ່ວນຂອງສະໜາມ ໂຄງການ (ສັນຍາເຊົ່າທີ່ດິນ) ລົງວັນທີ 29 ສິງຫາ 2013 ເຊິ່ງເຊັນຮ່ວມກັນ ລະຫວ່າງ ບໍລິສັດ ແລະ ລັດຖະບານລາວ, ຕາງໜ້າໂດຍ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍການຮັບຮອງເອົາການຕົກລົງໃຫ້ສຳປະທານແກ່ ບໍລິສັດ ສະບັບເລກທີ 062/ຄຈປ ລົງວັນທີ 04 ເມສາ 2014.
- ອີງຕາມໜັງສືສະເໜີ ຂອງກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 0801/ພບ, ລົງວັນທີ 10.06.2014.

ຄຳສັບພິມເຂັ້ມທີ່ບໍ່ໄດ້ນິຍາມໄວ້ໃນດຳລັດສະບັບນີ້ ໃຫ້ມີຄວາມໝາຍຕາມທີ່ອະທິບາຍໄວ້ໃນສັນຍາສຳປະທານ.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1. ດຳລັດສະບັບນີ້ໄດ້ຮັບຮອງ:**

1.1 ອີງຕາມມາດຕາ 66(2) ຂອງ ກົດໝາຍວ່າດ້ວຍທີ່ດິນ, ສິດຂອງບໍລິສັດ ເພື່ອນຳໃຊ້ຊັບສິນບັດຄົງທີ່ທີ່ຕັ້ງຢູ່ໃນທີ່ດິນເຊົ່າ ເປັນຫຼັກຊັບຄ້ຳປະກັນ.

1.2 ອີງຕາມມາດຕາ 18 ແລະ 19 ຂອງ ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳຂະໜາດໃຫຍ່ ແລະ ກິດຈະກຳຂະໜາດໃຫຍ່ ສຳລັບຈຸດປະສົງຂອງໂຄງການ ແລະ ການຄຸ້ມຄອງໂຄງການ.

1.3 ການຕົກລົງລາຄາໄຟຟ້າທີ່ກຳນົດໄວ້ໃນ ສັນຍາຊື້ຂາຍໄຟຟ້າກັບ EGAT ແລະ ສັນຍາຊື້ຂາຍໄຟຟ້າກັບ ຟຟລ ແມ່ນຖືກຕ້ອງຕາມມາດຕາ 47 ແລະ 48 ຂອງກົດໝາຍວ່າດ້ວຍໄຟຟ້າ.

**ມາດຕາ 2. ດຳລັດສະບັບນີ້ໄດ້ຍົກເວັ້ນ:**

2.1 ບໍລິສັດຈາກມາດຕາ 4 ຂອງ ດຳລັດວ່າດ້ວຍກົດໝາຍການສົ່ງເສີມການລົງທຶນ, ເຊິ່ງຖ້າຫາກບໍ່ໄດ້ຮັບການຍົກເວັ້ນ ກໍຈະເຮັດໃຫ້ບໍລິສັດຕ້ອງຖອກທຶນຢ່າງໜ້ອຍ ຊາວສ່ວນຮ້ອຍ (20%) ຂອງທຶນຈົດທະບຽນຂອງບໍລິສັດ ພາຍໃນເວລາ 90 ວັນລັດຖະການ ນັບແຕ່ວັນທີ່ສ້າງຕັ້ງບໍລິສັດ ແລະ ຖອກທຶນຈົດທະບຽນທີ່ເຫຼືອພາຍໃນ 2 ປີ ນັບແຕ່ວັນທີ່ສ້າງຕັ້ງບໍລິສັດ.

2.2 ບໍລິສັດຈາກມາດຕາ 4 ຂອງ ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍການສົ່ງເສີມການລົງທຶນ, ເຊິ່ງຖ້າຫາກບໍ່ໄດ້ຮັບການຍົກເວັ້ນ ກໍຈະເຮັດໃຫ້ບໍລິສັດຕ້ອງຈ່າຍທຶນຈົດທະບຽນເປັນສະກຸນເງິນກີບ.

2.3 ບໍລິສັດຈາກຂໍ້ກຳນົດຂອງມາດຕາ 18 ຂອງ ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍການສົ່ງເສີມການລົງທຶນ, ເຊິ່ງຖ້າຫາກບໍ່ໄດ້ຮັບການຍົກເວັ້ນ ກໍຈະເຮັດໃຫ້ບໍລິສັດຕ້ອງຖອກທຶນຈົດທະບຽນທັງໝົດລ່ວງໜ້າກ່ອນການໂອນຮຸ້ນໃຫ້: (i) ບໍລິສັດໃນເຄືອຂ່າຍ, (ii) ເມື່ອຜູ້ໃຫ້ກູ້ຢືມບັງຄັບໃຊ້ຫຼັກຊັບຄ້ຳປະກັນຕໍ່ກັບຮຸ້ນໃນບໍລິສັດ ແລະ (iii) ລະຫວ່າງຜູ້ຖືຮຸ້ນດ້ວຍກັນເອງ.

2.4 ບໍລິສັດຈາກຂໍ້ກຳນົດໃນມາດຕາ 4 ຂອງ ດຳລັດວ່າດ້ວຍການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ທີ່ກຳນົດໃຫ້ຈ່າຍຄ່າເຊົ່າທີ່ດິນສຳລັບພື້ນທີ່ໃດໜຶ່ງພາຍໃນສະໜາມໂຄງການ, ເຊິ່ງອີງຕາມສັນຍາສຳປະທານ ແລະ ສັນຍາເຊົ່າທີ່ດິນ ບໍລິສັດຈະຕ້ອງຈ່າຍຄ່າເຊົ່າສຳລັບເຂດທີ່ດິນໃນສະໜາມໂຄງການ ທີ່ຖືກກຳນົດໃຫ້ຢູ່ພາຍໃຕ້ສິດນຳໃຊ້ທີ່ດິນສະເພາະຜູ້ດຽວ.

2.5 ບໍລິສັດຈາກພັນທະທີ່ໃຫ້ຈ່າຍຄ່າໃດກໍຕາມ ຕາມການກຳນົດຂອງດຳລັດວ່າດ້ວຍປ່າປ້ອງກັນ, ໂດຍສະເພາະຈາກມາດຕາ 29(4) (ທີ່ກຳນົດໃຫ້ມີການປະກອບທຶນເຂົ້າໃນຄຸ້ມຄອງ, ປົກປັກຮັກສາ ແລະ ອານຸລັກປ່າປ້ອງກັນ ແລະ ຮັກສາສິ່ງແວດລ້ອມ); ຈາກມາດຕາ 29(5) (ທີ່ກຳນົດໃຫ້ນິຕິບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ປ່າປ້ອງກັນ ແລະ ເນື້ອທີ່ປ່າໄມ້ ຕ້ອງຈ່າຍຄ່ານຳໃຊ້ແຫຼ່ງຊັບພະຍາກອນປ່າໄມ້, ຄ່າບໍລິການ ແລະ ອາກອນອື່ນໆຕາມທີ່ລະບຸໃນກົດໝາຍ ແລະ ລະບຽບການ); ແລະ ຈາກມາດຕາ 31 (ທີ່ກຳນົດໃຫ້ຜູ້ພັດທະນາໂຄງການເຂື່ອນໄຟຟ້ານ້ຳຕົກ ໃຫ້ປະກອບທຶນຈຳນວນ 1% ຂອງມູນຄ່າທັງໝົດຂອງການຂາຍໄຟຟ້າໃນແຕ່ລະປີ), ໂດຍໃຫ້ບໍລິສັດປະຕິບັດຕາມບົດບັນຍັດຂອງ ເອກະສານຊ້ອນທ້າຍ C ຂອງສັນຍາສຳປະທານ (ພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ).

2.6 ບໍລິສັດ, ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຊ່ວງຕໍ່ທີ່ບໍ່ແມ່ນນິຕິບຸກຄົນລາວ ຈາກຂໍ້ກຳນົດດ້ານການປະກັນສັງຄົມຕາມທີ່ລະບຸໃນດຳລັດວ່າດ້ວຍລະບອບປະກັນສັງຄົມ ສຳລັບພະນັກງານທີ່ບໍ່ແມ່ນພົນລະເມືອງຂອງ ສປປ ລາວ.

2.7 ບໍລິສັດຈາກມາດຕາ 43 ຂອງດຳລັດວ່າດ້ວຍການເຊົ່າ ຫຼື ສຳປະທານທີ່ດິນຂອງລັດທີ່ກ່ຽວກັບການຄິດໄລ່ຄ່າຊົດເຊີຍສຳລັບປະຊາຊົນ ທີ່ຖືກກະທົບຈາກໂຄງການ, ໂດຍໃຫ້ບໍລິສັດປະຕິບັດຕາມບົດບັນຍັດ ຂອງແຜນຕິດຕາມຄຸ້ມຄອງດ້ານສັງຄົມ ທີ່ໄດ້ຖືກຮັບຮອງ ແລະ ສັນຍາສຳປະທານ.

**ມາດຕາ 3. ດຳລັດສະບັບນີ້:**

3.1 ອອກໃຫ້ໃນນາມລັດຖະບານ ແຫ່ງ ສປປ ລາວ ແລະ ຈະຕ້ອງຖືກຄຸ້ມຄອງ ແລະ ຕີຄວາມໝາຍ ຕາມກົດໝາຍຂອງ ສປປ ລາວ.

3.2 ສາມາດນຳໃຊ້ໄດ້ໂດຍບໍລິສັດ, ຜູ້ຮັບເໝົາ, ຜູ້ຮັບເໝົາຊ່ວງຕໍ່, ຜູ້ໃຫ້ກູ້ຢືມ, ຜູ້ຖືຮຸ້ນ ແລະ ຝ່າຍທີ່ໄດ້ຮັບອະນຸຍາດຕາມສັນຍາສຳປະທານ ເພື່ອໃຫ້ເປັນຜູ້ມີພັນທະຮ່ວມກັບ ຫຼື ຜູ້ສືບທອດຂອງບໍລິສັດ ພາຍໃຕ້ສັນຍາສຳປະທານ ຈົນເຖິງຂອບເຂດທີ່ບັນຍັດໄວ້